## “ການພັດທະນາ ກະສິກຳ ແບບມີສ່ວນຮ່ວມ” ແມ່ນຫຍັງ"?

ວິທີການພັດທະນາກະສິກຳ ແບບມີສ່ວນຮ່ວມ ແມ່ນແນ່ໃສ່ການເພີ່ມລາຍຮັບໃຫ້ຊາວນາ ໃນການຜະລິດກະສິກຳ, ຊຸກຍູ້ການລິເລີ່ມ ຂອງຊາວນາໃນການປັບປຸງກິດຈະກຳຕ່າງໆ (ດ້ານຊົນລະປະທານ, ການປູກຝັງ, ການຂາຍຜົນຜະລິດ, ອື່ນໆ) ໂດຍການມີສ່ວນຮ່ວມຈາກຫລາຍພາກສ່ວນ.

ສິ່ງສຳຄັນຕົ້ນຕໍ, ວິທີການປະຕິບັດ ແມ່ນແນ່ໃສ່ແນວຄິດດັ່ງລຸ່ມນີ້:

- ຊາວນາສາມາດພິຈາລະນາໃນການປັບປຸງກິດຈະກຳການປູກຝັງດ້ວຍຕົນເອງ;
- ຊາວນາມີສ່ວນຮ່ວມ ຢ່າງຫ້າວຫັນໃນການຕັດສິນໃຈໃນກຸ່ມຊາວນາ;
- ຝ່າຍລັດໃຫ້ການສະໜັບສະໜູນ ດ້ານເຕັກ





ໄລຍະການຈັດຕັ້ງປະຕິບັດໂຄງການ:
ນັບແຕ່ ເດືອນ ມິຖຸນາ 2017 - ເດືອນ ມິຖຸນາ 2022 (5 ປີ)

ບ້ານເປົ້າໝາຍ (ຈົນເຖິງ ເດືອນ ກຸມພາ 2018):
ມີ 4 ບ້ານເປົ້າໝາຍ ຢູ່ແຂວງສະຫວັນນະເຂດ:

| | |
|---|---|
| ບ້ານຕົ້ນແຫນ | ເມືອງໄຊບູລີ |
| ບ້ານສົມສະອາດ | |
| ບ້ານໂພນທອງ-ດອນແຍງ | ເມືອງຈຳພອນ |
| ບ້ານແກ້ງກອກເໜືອ | |


ໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ
ແຂວງສະຫວັນນະເຂດ

ຕູ້ ປ.ນ. 16, ຂະແໜງຊົນລະປະທານ ແຂວງ,
ພະແນກກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ,
ສປປ ລາວ
ໂທ : +856-41-252497




# Savan PAD

ໂຄງການ ພັດທະນາກະສິກຳ ແບບມີສ່ວນຮ່ວມ
ແຂວງສະຫວັນນະເຂດ


ແຂວງສະຫວັນນະເຂດ, ສປປ ລາວ

ອົງການຍີ່ປຸ່ນ ເພື່ອການຮ່ວມມືສາກົນ

# Savan PAD - ວິທີການປະຕິບັດ

ແຜນພັດທະນາເສດຖະກິດ-ສັງຄົມ ຂອງ ແຂວງສະຫວັນນະເຂດ ໄດ້ກຳນົດຍຸດທະສາດ ໃນການພັດທະນາກະສິກຳ, ໂດຍແນໃສ່; 1). ຄວາມໝັ້ນຄົງທາງດ້ານການຜະລິດ ສະບຽງອາຫານ ແລະ ໂພຊະນາການ; 2). ປັບປຸງການຜະລິດກະສິກຳທາງດ້ານຄຸນນະພາບ ແລະ ປະລິມານ ເພື່ອຂາຍເປັນສິນຄ້າ ພ້ອມທັງ ສົ່ງເສີມການຜະລິດກະສິກຳ ສະອາດ; 3). ການຄຸ້ມຄອງຊັບພະຍາ ກອນປ່າໄມ້ແບບຍືນຍົງ; ແລະ 4). ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ ພວມຈັດຕັ້ງປະຕິບັດ ເພື່ອສະໜັບສະໜູນບັນດາຍຸດທະສາດດັ່ງກ່າວ, ໂດຍແນ່ໃສ່ ການຜະລິດກະສິກຳ ເພື່ອເພີ່ມລາຍຮັບ ໃຫ້ຊາວນາ ແລະ ສະໜັບສະໜູນການພັດທະນາເສດຖະ ກິດ-ສັງຄົມ ຂອງ ແຂວງສະຫວັນນະເຂດ.







**ເພີ່ມລາຍຮັບໃຫ້ຊາວນາ**

**ການປູກຝັງ / ການຕະຫລາດ**

*ການມີສ່ວນຮ່ວມ ທີ 1 : ສ້າງຄວາມເຂັ້ມແຂງດ້ວຍຕົນເອງ*

**ການຄຸ້ມຄອງນຳໃຊ້ນ້ຳຊົນລະປະທານM**

**ການຜະລິດແນ່ໃສ່ຄວາມຕ້ອງການຂອງຕະຫລາດ**
ເລືອກ ແລະ ປູກພືດທີ່ຕະຫລາດມີຄວາມຕ້ອງການ

**ສົ່ງເສີມການຂາຍຜົນຜະລິດ**
ຊອກຫາຕະຫລາດ ແລະ ການວາງສະແດງຜົນຜະລິດ

**ຍົກສະມັດຕະພາບການຜະລິດ**
ເພີ່ມສະມັດຕະພາບການຜະລິດຕໍ່ເຮັກຕາ

**ປັບປຸງການຄຸ້ມຄອງບໍລິຫານການປູກຝັງ**
ຍົກລະດັບຄວາມສາມາດໃນການວາງແຜນ ແລະ ການບໍລິຫານຄ່າໃຊ້ຈ່າຍໃນການປູກຝັງ

**ເພີ່ມປະສິດທິຜົນການນຳໃຊ້ນ້ຳຊົນລະປະທານ**
ຍົກລະດັບຄວາມສາມາດໃນການຫລຸດຜ່ອນ ຄ່ານ້ຳຊົນລະປະທານ ແລະ ຂະຫຍາຍເນື້ອທີ່ຊົນລະປະທານ

ຮູບແບບ ຂອງ ໂຄງການ PIAD

ການພົວພັນຊຶ່ງກັນ ແລະກັນ

*ການມີສ່ວນຮ່ວມ ທີ 2 : ຮັບຟັງຄວາມຄິດເຫັນຂອງຊາວນາ/ເຮັດວຽກຮ່ວມກັບຊາວນາ*

**ການສະໜັບສະໜູນຈາກຝ່າຍລັດ 1**
ຍົກລະດັບຄວາມສາມາດໃຫ້ ພະນັກງານຂັ້ນເມືອງ /ຂັ້ນແຂວງໃນການຈັດຕັ້ງປະຕິບັດ ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແລະ ການວາງແຜນງົບປະມານ

ການສະໜັບສະໜູນ

*ການມີສ່ວນຮ່ວມ ທີ 3 : ການຮ່ວມມືດ້ວຍຄວາມເອົາໃຈໃສ່ ຈາກຂະແໜງການຕ່າງໆ*

**ການສະໜັບສະໜູນຈາກຝ່າຍລັດ 2**
ສ້າງຕັ້ງຄະນະສົ່ງເສີມ ການຜະລິດກະສິກຳແບບມີສ່ວນຮ່ວມ ຂັ້ນແຂວງ